ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ
Lao Chamber of Professional Accountants and Auditors

ບົດລາຍງານ

ການເຄື່ອນໄຫວວຽກງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ
ມັງກອນ (1) - ທັນວາ (12) 2020

COPY

ສາລະບານ

I. ສະຖານະພາບລວມ: 1
1.1 ສະຖານະດ້ານກົດໝາຍ: 1
1.2 ດ້ານການຄົ້ນຄ້ວານິຕິກຳພາຍໃນ: 2
1.3 ດ້ານການຈັດຕັ້ງ: 2
III. ດ້ານການເຄື່ອນໄຫວ: 6
3.1 ການປະສານງານ ແລະ ການຮ່ວມມື 6
3.2 ການຈັດຝຶກອົບຮົມ: 7
3.2.1 ການຈັດຝຶກອົບຮົມ ຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA): 7
IV. ດ້ານການເງິນ 18
4.1 ລາຍຮັບ: 18
4.2 ຂົງເຂດລາຍຈ່າຍ: 18
V. ແຜນການເຄື່ອນໄຫວປະຈຳປີ 2021 18

I. ສະຖານະພາບລວມ:

1.1 ສະຖານະດ້ານກົດໝາຍ:

1.1.1 ປະຫວັດຄວາມເປັນມາຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ອົງການຈັດຕັ້ງວິຊາຊີບການບັນຊີ ຊຶ່ງຢູ່ພາຍໃຕ້ການຊີ້ນຳ ຂອງກະຊວງການເງິນ ຖືກສ້າງຕັ້ງຂຶ້ນ ໃນປີ 1998 ຕາມຂໍ້ຕົກລົງລັດຖະມົນຕີກະຊວງການເງິນເລກທີ 0722/ກງ ເພື່ອປະຕິບັດຕາມດຳລັດຂອງນາຍົກລັດຖະມົນຕີເລກທີ 161/ນຍ ໃນປີ 1996. ຈາກນັ້ນໄດ້ປ່ຽນຊື່ ເປັນສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕາມຂໍ້ຕົກລົງຂອງ ລັດຖະມົນຕີກະຊວງການເງິນ ເລກທີ 1004/ກງ ລົງວັນທີ 7 ເມສາ 2015 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການ ກວດສອບອິດສະຫຼະປີ 2014.

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA), ຊຶ່ງປັດຈຸບັນປະເທດມຽນມາເປັນປະທານ. ສອ-ບກລ ໄດ້ເຂົ້າເປັນສະມາຊິກສົມທົບຂອງ ສະຫະພັນນັກບັນຊີສາກົນ (IFAC) ຊຶ່ງໄດ້ຖືກຮັບຮອງເປັນທາງການໃນວັນທີ 13 ພະຈິກ 2019 ຊຶ່ງມີຂໍ້ຜູກມັດປະຕິບັດແຜນການດຳເນີນງານ ທີ່ສອດຄ່ອງ ກັບ 7 ພັນທະຕົ້ນຕໍທີ່ຖືກກຳນົດໂດຍສະຫະພັນນັກບັນຊີສາກົນ.

1.1.2 ພາລະບົດບາດຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ພາລະບົດບາດຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການກວດ ສອບອິດສະຫຼະແມ່ນການປະກອບຄຳເຫັນໃຫ້ແກ່ລັດ, ປຸກລະດົມຂົນຂວາຍ, ນຳພາ, ເຕົ້າໂຮມສະມາຊິກລວມທັງປົກ ປ້ອງສິດຜົນປະໂຫຍດອັນຊອບທຳຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມລະບຽບ ກົດໝາຍ, ຊ່ວຍອົງການຂອງລັດໃນການສົ່ງເສີມ, ພັດທະນາ ແລະ ຍົກລະດັບວິຊາຊີບການບັນຊີ ແລະ ການກວດສອບ.

1.1.3 ໜ້າທີ່ຫຼັກຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ໜ້າທີ່ຫຼັກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ ດ້ານວິຊາຊີບການບັນຊີ ແລະ ການກວດສອບ; ຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີຂອງບັນດາ ປະເທດພາກພື້ນ ແລະ ສາກົນ; ແລະ ຕິດຕາມກວດກາການເຄື່ອນໄຫວຂອງສະມາຊິກຕົນ.

ນອກນັ້ນ, ຍັງຕ້ອງສືບຕໍ່ປັບປຸງຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ແລະ ການຝຶກອົບຮົມແບບຕໍ່ເນື່ອງ (CPD) ໃຫ້ສອດຄ່ອງກັບສັນຍາຮັບຮູ້ເຊິ່ງກັນແລະກັນດ້ານການບໍລິການບັນຊີອາຊຽນທີ່ລັດຖະບານລາວໄດ້ເຊັນຮ່ວມ ກັບບັນດາປະເທດສະມາຊິກອາຊຽນໃນປີ 2015 (ພາຍຫຼັງທີ່ໄດ້ເຊັນສັນຍາຂໍ້ຕົກລົງໃນປີ 2014).

ເພື່ອສາມາດດຳເນີນໜ້າທີ່ໃນການຈັດຝຶກອົບຮົມ ລັດຖະມົນຕີກະຊວງການເງິນໄດ້ອອກຂໍ້ຕົກລົງ ເລກທີ 3777/ກງ ລົງວັນທີ 2 ພະຈິກ 2015 ວ່າດ້ວຍການອະນຸມັດໃຫ້ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ດຳເນີນ ການຝຶກອົບຮົມດ້ານວິຊາຊີບ.

1.2 ດ້ານການຄົ້ນຄ້ວານິຕິກຳພາຍໃນ:

- ສຳເລັດການສ້າງລະບຽບການຝຶກງານ ສຳລັບຊຸດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ ເພື່ອໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາ ແລະ ສາມາດນຳໃຊ້ເຂົ້າໃນສະພາບການຕົວຈິງຂອງລາວ. ລະບຽບການດັ່ງກ່າວ ໄດ້ຮ່າງຂຶ້ນໂດຍທີ່ປຶກສາຂອງ ສອ-ບກລ ໂດຍໄດ້ເກັບກຳຂໍ້ມູນລະອຽດກ່ຽວກັບສະພາບຕົວຈິງຂອງຜູ້ທີ່ຈະເປັນນັກຝຶກງານ ແລະ ຜ່ານການຄົ້ນຄວ້າປຶກສາຫາລືຫຼາຍຄັ້ງນຳຄະນະກຳມະການຝຶກອົບຮົມ ແລະ ເຊັນຮັບຮອງນຳໃຊ້ໃນວັນທີ 14 ສິງຫາ (8) 2020.

- ສ້າງໂຄງການພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສອ-ບກລ, ໃຫ້ສອດຄ່ອງກັບສະພາບເສດຖະກິດແລະສັງຄົມຂອງລາວໃນປັດຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາ ແລະ ຄາດວ່າຈະສຳເລັດໃນປີ 2022.


- ສຳເລັດການສ້າງປຶ້ມຄູ່ມືການບັນຊີ ເພື່ອເປັນຄູ່ມືໃນການຈັດຕັ້ງປະຕິບັດລະບຽບ ແລະ ນະໂຍບາຍທາງດ້ານການເງິນ ແລະ ເຊັນຮັບຮອງນຳໃຊ້ໃນວັນທີ 14 ສິງຫ (8) 2020.

1.3 ດ້ານການຈັດຕັ້ງ:

1.3.1ຄະນະບໍລິຫານ ແລະ ບຸກຄະລາກອນ:

- ປະທານ 1 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 582/ກງ ລົງວັນທີ 22 ກຸມພາ(2)2014;
- ຮອງປະທານ 1 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ3778/ກງ ລົງວັນທີ 2 ພະຈິກ 2015);
- ຄະນະບໍລິຫານງານ 7 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2631/ກງ ລົງວັນທີ 16 ສິງຫາ 2018);
- ຄະນະກຳມະການຝຶກອົບຮົມ 10 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ສະບັບເລກທີ 030/ສອ-ບກລ ລົງວັນທີ 12 ພຶດສະພາ 2016 ຂອງປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ). ຄະນະກຳມະການດັ່ງກ່າວໄດ້ມີການຈັດກອງປະຊຸມ 4 ຄັ້ງຕໍ່ປີ ເພື່ອຕິດຕາມ ແລະ ສະຫຼຸບຜົນການຈັດຕັ້ງປະຕິບັດຝຶກອົບຮົມທີ່ຜ່ານມາ ແລະ ແຜນການຝຶກອົບຮົມໃນຕໍ່ໜ້າ, ແຕ່ເນື່ອງຈາກວ່າຄະນະຈຳນວນໜຶ່ງ ບໍ່ສາມາດເຂົ້າຮ່ວມປະຊຸມຢ່າງຕໍ່ເນື່ອງ ຈຶ່ງມີແຜນປັບປຸງຄະນະດັ່ງກ່າວຄືນໃນປີ 2020;
- ຄະນະກຳມະການຈົດທະບຽນ ຈຳນວນ 7 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ຂອງປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ສະບັບເລກທີ 001/ສອ-ບກລ ລົງວັນທີ 07 ມັງກອນ 2019) ຈາກນວນ 10 ທ່ານ. ຄະນະດັ່ງກ່າວທີ່ຖືກແຕ່ງຕັ້ງຍັງ ບໍ່ສາມາດເຄື່ອນໄຫວໄດ້ເທົ່າທີ່ຄວນ. ສະນັ້ນ, ຈະໄດ້ມີການປັບປຸງຄະນະດັ່ງກ່າວຄືນ;
- ບຸກຄະລາກອນ 5 ທ່ານ, ຍິງ 3 ທ່ານ ແລະ ພ້ອມນີ້ຍັງມີທີ່ປຶກສາດ້ານວິຊາການ 1 ທ່ານ.

ໂຄງຮ່າງການຈັດຕັ້ງຂອງ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ



1.3.2 ດ້ານນະໂຍບາຍ-ດ້ານການສົ່ງເສີມ ບຸກຄະລາກອນ:

ໄດ້ໃຫ້ໂອກາດພະນັກງານເຂົ້າຮ່ວມປະຊຸມສຳມະນາ ແລະ ຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຂອງ ສອ-ບກລ ທາງດ້ານເຕັກນິກວິຊາການທີ່ກ່ຽວຂ້ອງ ໂດຍສະເພາະແມ່ນເຂົ້າຮ່ວມຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານ ບັນຊີລາວ.

II. ສະມາຊິກ:

ໃນປີ 2020 ທີມງານ ສອ-ບກລ ໄດ້ມີການຕິດຕາມພົວພັນສະມາຊິກໂດຍປະສານສົມທົບກັບ ພະແນກຄຸ້ມ ຄອງກວດສອບອິດສະຫຼະ-ກົມບັນຊີ ເພື່ອຕິດຕາມການປະຕິບັດລະບຽບ, ການປະຕິບັດພັນທະຕ່າງໆ ໂດຍສະເພາະ ແມ່ນສະມາຊິກສາມັນນິຕິບຸກຄົນ ແລະ ສະມາຊິກສາມັນບຸກຄົນ ແລະ ນອກຈາກນັ້ນຍັງໄດ້ລະດົມໃຫ້ນັກວິຊາຊີບບັນຊີ ແລະ ກວດສອບມາສະໝັກເຂົ້າເປັນສະມາຊິກຂອງ ສອ-ບກລ ໂດຍສະເພາະແມ່ນທີ່ປຶກສາບັນຊີລຸ້ນ 1-11 ແລະ ສອ-ບກລ ຍັງໄດ້ເຜີຍແຜ່ລະບຽບການຕ່າງໆໃຫ້ແກ່ສະມາຊິກຮັບຊາບດ້ວຍວິທີການສົ່ງລະບຽບຜ່ານທາງອີເມວ, ທາງເວບ ໄຊ ແລະ ແຈກຢາຍໃນເວລາມາສະໝັກເປັນສະມາຊິກຂອງສອ-ບກລ ແລະ ເວລາມາຕໍ່ອາຍຸສະມາຊິກ, ຊຶ່ງລາຍ ລະອຽດຈຳນວນສະມາຊິກໃນທ້າຍປີ 2020 ມີດັ່ງລຸ່ມນີ້:

2.1 ສະມາຊິກນິຕິບຸກຄົນຂອງ ສອ-ບກລ

ໃນທ້າຍປີ 2020 ສອ-ກລ ມີສະມາຊິກນິຕິບຸກຄົນທັງໝົດ ຈຳນວນ 92 ຫົວໜ່ວຍ (ມີລາຍລະອຽດຄັດຕິດໃນ ເອກະສານຊ້ອນທ້າຍ).

2.2 ສະມາຊິກບຸກຄົນຂອງ ສອ-ບກລ


ໃນປີ 2020 ມີສະມາຊິກບຸກຄົນ ຈຳນວນ 224 ທ່ານ, ໃນນັ້ນມີສະມາຊິກສາມັນບຸກຄົນ 167 ທ່ານ, ສະມາຊິກສົມທົບປະກອບອາຊີບ 23 ທ່ານ ແລະ ສະມາຊິກສົມທົບບໍ່ປະກອບອາຊີບ 54 ທ່ານ, ຊຶ່ງລາຍລະອຽດສາມາດເບິ່ງ ໄດ້ໃນຕາຕະລາງ 1:

ຕາຕະລາງ 1: ສະມາຊິກບຸກຄົນຂອງ ສອ-ບກລ

ລ/ດ	ເນື້ອໃນລາຍລະອຽດ	ຈຳນວນລວມສະມາຊິກໃນປີ 2020
1	ສະມາຊິກສາມັນບຸກຄົນ	167
2	ສະມາຊິກສົມທົບປະກອບອາຊີບ	23
3	ສະມາຊິກສົມທົບບໍ່ປະກອບອາຊີບ	54
ລວມ:		**244**

ສະມາຊິກທັງໝົດຂອງ ສອ-ບກລ ໄດ້ແບ່ງອອກເປັນຕາມແຕ່ລະປະເພດຂອງສະມາຊິກ ຊຶ່ງລາຍລະອຽດແຕ່ລະປະເພດມີດັ່ງນີ້:

ໂຄງຮ່າງສະແດງ ການຈຳແນກປະເພດສະມາຊິກຂອງ ສອ-ບກລ



III. ດ້ານການເຄື່ອນໄຫວ:

ອີງໃສ່ການປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດ ໂຄວິດ 19, ການຈັດຕັ້ງປະຕິບັດກິດຈະກຳຂອງສອ-ບກລໃນປີ 2020 ບໍ່ສາມາດປະຕິບັດໄດ້ຕາມແຜນທີ່ວາງໄວ້ ໂດຍສະເພາະແມ່ນການຝຶກອົບຮົມນັກຊ່ຽວຊານບັນຊີລາວ, ການຈັດກອງປະຊຸມ, ການສຳມະນາ. ແຕ່ເຖິງຢ່າງໃດກໍຕາມ ເພື່ອປະຕິບັດຕາມຄຳສັ່ງຂອງລັດຖະບານ ທີມງານສອ-ບກລ ໄດ້ປະຕິບັດວຽກງານຢູ່ບ້ານຂອງຕົນ ໂດຍໄດ້ພະຍາຍາມເຄື່ອນໄຫວວຽກງານ, ການຝຶກອົບຮົມໃນຮູບແບບທາງ (WhatsApp), ທາງສະກາຍປ໌ (Skype) ແລະ Zoom ເຊັ່ນ: ການຈັດກອງປະຊຸມ, ການປະສານກັບສະມາຊິກ, ການປະສານກັບນັກຝຶກອົບຮົມ ແລະ ການປະສານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຊຶ່ງລາຍລະອຽດໃນການເຄື່ອນໄຫວວຽກໃນປີ 2020 ມີດັ່ງລຸ່ມນີ້:

3.1 ການປະສານງານ ແລະ ການຮ່ວມມື

- ປະສານ ແລະ ຮ່ວມມືກັບກະຊວງການເງິນ-ກົມບັນຊີ ເພື່ອຕິດຕາມການເຄື່ອນໄຫວຂອງສະມາຊິກ;
- ປະສານຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ, ຄະນະເສດຖະສາດ, ພາກບັນຊີ (NUoL) ແລະ ມະຫາວິທະຍາໄລສີປະທຸມ (SPU) ເພື່ອວາງແຜນຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານການບັນຊີ ໃຫ້ແກ່ນັກບັນຊີລາວ ແລະ ນັກສຶກສາໃນລະດັບມະຫາວິທະຍາໄລ;
- ປະສານຮ່ວມມືກັບ CPA Australia ເພື່ອກະກຽມການຝຶກອົບຮົມ ຍົກລະດັບທາງດ້ານວິຊາຊີບການບັນຊີ ໃຫ້ແກ່ນັກຊ່ຽວຊານບັນຊີ;
- ປະສານຮ່ວມມືກັບ ACCA ເພື່ອວາງແຜນ ປັບປຸງລະບົບການຮຽນ ແລະ ການສອນ ຫຼັກສູດວິຊາຊີບຊ່ຽວຊານ ບັນຊີລາວ (Lao CPA) ໃຫ້ມີຄຸນນະພາບສູງສຸດ ໂດຍສະເພາະແມ່ນຫຼັກສູດການຮຽນ-ການສອນ ແລະ ນອກຈາກນີ້ ACCA ຍັງເປັນຜູ້ສະໜັບສະໜຸນການກຽມເຂົ້າເປັນສະມາຊິກສະຫະພັນນັກບັນຊີສາກົນ (IFAC);
- ປະສານກັບສະຖາບັນການທະນາຄານ ເພື່ອປຶກສາຫາລື ແລກປ່ຽນບົດຮຽນທາງດ້ານວິຊາການ, ການກະກຽມການເປີດສອນຫຼັກສູດສາກົນຮ່ວມກັນ.



- ປະສານກັບກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ເພື່ອແລກປ່ຽນຂໍ້ມູນບໍລິສັດທີ່ປຶກສາ ບັນຊີ ແລະ ກວດສອບທີ່ເປັນສະມາຊິກຂອງ ສວ-ບກລ ແລະ ວາງແຜນສະໜັບສະໜຸນ ແລະ ໃຫ້ໂອກາດແກ່ ບໍລິສັດທີ່ເປັນຂອງຄົນລາວ ສາມາດເຂົ້າເຖິງ ແລະ ມີສ່ວນແບ່ງທາງການຕະຫຼາດ ໂດຍສະເພາະແມ່ນກົມຄຸ້ມ ຄອງສະຖາບັນທະນາຄານ;

3.2 ການຈັດຝຶກອົບຮົມ:

3.2.1 ການຈັດຝຶກອົບຮົມ ຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA):

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຕັ້ງວິຊາຊີບນັກບັນຊີ ແລະ ນັກກວດສອບ ຊຶ່ງໜຶ່ງ ໃນໜ້າທີ່ຫຼັກແມ່ນການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ກວດສອບ ຈຶ່ງຕ້ອງມີການ ປັບປຸງຫຼັກສູດຂອງຕົນເປັນແຕ່ລະໄລຍະ ໂດຍໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາ ສຳລັບວິຊາຊີບ ການບັນຊີ ທີ່ສະຫະພັນນັກບັນຊີສາກົນຮັບຮອງ, ອີກຢ່າງໜຶ່ງກໍເພື່ອສາມາດປະຕິບັດສັນຍາວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນດ້ານການບໍລິການບັນຊີ ຂອງອາຊຽນ ທີ່ລັດຖະບານແຫ່ງ ສປປ ລາວ ໄດ້ເຊັນຮັບຮອງໃນປີ 2015 ແລະ ກໍເພື່ອ ປະຕິບັດພັນທະການເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA) ຊຶ່ງ ສວ-ບກລ ໄດ້ເຂົ້າເປັນສະມາຊິກ ສົມທົບຂອງສະຫະພັນນັກບັນຊີສາກົນ (IFAC) ຢ່າງເປັນທາງການໃນວັນທີ 13 ພະຈິກ 2019.

ນັບແຕ່ປີ 2016, ເພື່ອໃຫ້ຫຼັກສູດວິຊາຊີບຊ່ຽວຊານບັນຊີ ຂອງ ສວ-ບກລ ສອດຄ່ອງກັບມາດຕະຖານສາກົນ ດ້ານການສຶກສາ, ສວ-ບກລ ໄດ້ຮ່ວມມືກັບ ACCA, ໜຶ່ງໃນບັນດາອົງການຈັດຕັ້ງວິຊາຊີບການບັນຊີ ຂອງລາຊະ ອານາຈັກອັງກິດ, ທີ່ໄດ້ອະນຸຍາດໃຫ້ ສວ-ບກລ ນຳໃຊ້ຫຼັກສູດຂອງຕົນ ເພື່ອພັດທະນາຫຼັກສູດນັກຊ່ຽວຊານບັນຊີຂອງ ລາວ. ຫຼັກສູດດັ່ງກ່າວ ນຳໃຊ້ກັນໃນທົ່ວໂລກ ແລະ ສອດຄ່ອງກັບມາດຕະຖານສາກົນ, ຊຶ່ງແບ່ງອອກເປັນ 2 ລະດັບຄື: ລະດັບວິຊາພື້ນຖານ 9 ວິຊາ ແລະ ວິຊາລະດັບວິຊາຊີບ 4 ວິຊາ. ໂດຍປົກກະຕິແລ້ວສາມາດເສັງຈົບທັງໝົດທຸກວິຊາ ພາຍໃນ 3 ປີ. ການຝຶກອົບຮົມແມ່ນໃຊ້ປຶ້ມຕຳລາຂອງ ACCA ເປັນພາສາອັງກິດເປັນພື້ນຖານໃນການແຕ່ງບົດສອນ ສ່ວນການສອບເສັງແມ່ນ ສວ-ບກລ ເປັນຜູ້ກະກຽມ ແລະ ຈັດເອງ.

ສະນັ້ນ, ເພື່ອປະຕິບັດຂໍ້ກຳນົດໃນການພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໂດຍສາມາດນຳໃຊ້ຕຳລາ ທີ່ ACCA ອະນຸມັດໃຫ້ນຳໃຊ້ເປັນພື້ນຖານ, ສວ-ບກລ ຈຶ່ງຕ້ອງສ້າງໂຄງການພັດທະນາຫຼັກສູດ (ຕຳລາ) ທີ່ນຳໃຊ້ໃນ ປັດຈຸບັນ ໂດຍຮັບສະໝັກເອົາຜູ້ທີ່ມີຄວາມຊຳນານງານດ້ານນີ້ ເພື່ອຊ່ວຍປະຕິບັດໂຄງການ. ຊຶ່ງປັດຈຸບັນໂຄງການ ດັ່ງກ່າວໄດ້ສຳເລັດໃນຂັ້ນພື້ນຖານເຊັ່ນ: ວິຊານັກບັນຊີໃນວິສາຫະກິດທົ່ວໄປ (F2), ວິຊານັກບັນຊີການເງິນ (F3), ຜູ້ນຳດ້ານຍຸດທະສາດທຸລະກິດ (SBL) ແລະ ການລາຍງານດ້ານຍຸດທະສາດທຸລະກິດ (SBR) ສຳເລັດໂດຍພື້ນຖານ. ສຳລັບການຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA) ປັດຈຸບັນປະກອບມີ 4 ລຸ້ນ ຊຶ່ງລາຍລະອຽດມີດັ່ງລຸ່ມນີ້:

- **ຝຶກອົບຮົມ (Lao CPA) ລຸ້ນ XII:**
  ປັດຈຸບັນແມ່ນສຳເລັດການສຳພາດ ນັກຝຶກອົບຮົມຈຳນວນ 45 ທ່ານ ທີ່ມີໃບຢັ້ງຢືນເປັນທີ່ປຶກສາບັນຊີ ລຸ້ນ 1-11 ມາເຊື່ອມຕໍ່ຍົກລະດັບໃນລຸ້ນ 12 ແລະ ຜູ້ທີ່ມີປະສົບການໃນການສອນ ຫຼາຍກວ່າ 10 ປີຈຳນວນ 2 ທ່ານ ເພື່ອແລກປ່ຽນປະສົບການໃນການເຮັດວຽກຜ່ານມາ, ຊຶ່ງການສຳພາດໄດ້ແບ່ງອອກເປັນ 3 ກຸ່ມ ແລະ ເລີ່ມການ ສຳພາດໃນວັນທີ 05 ທັນວາ 2020 ແລະ ສຳເລັດໃນວັນທີ 20 ທັນວາ 2020. ໃນຂະນະດຽວກັນ ຫຼັງຈາກ

ສຳເລັດການສຳພາດໄດ້ມີການຝຶກອົບຮົມວິຊາຈັນຍາບັນທາງດ້ານວິຊາຊີບ ພ້ອມທັງສອບເສັງທົດສອບຄວາມຮູ້ທາງດ້ານຈັນຍາບັນໃຫ້ແກ່ນັກຝຶກອົບຮົມລຸ້ນ 12, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈຳນວນ 100 ທ່ານ.

ອີງຕາມກອງປະຊຸມຂອງຄະນະກຳມະການຝຶກອົບຮົມ ນັກຝຶກອົບຮົມຜູ້ທີ່ຂໍຍົກເວັ້ນການຝຶກງານເປັນນັກຊ່ຽວຊານບັນຊີທັງໝົດລວມມີ 47 ທ່ານ ຊຶ່ງລວມມີ ຜູ້ສະໝັກທີ່ມີ ປະກາສະນີຍະບັດ ຫຼື ໃບຢັ້ງຢືນທີ່ປຶກສາບັນຊີ 45 ທ່ານ ແລະ ຜູ້ສະໝັກທີ່ເປັນ ອາຈານສິດສອນທີ່ມີປະສົບການຫຼາຍກວ່າ 10 ປີ 2 ທ່ານ ຕາມທີ່ໄດ້ກ່າວມາຂ້າງເທິງ ແມ່ນຈະແຈ້ງໃຫ້ເຂົ້າຮ່ວມການຝຶກອົບຮົມສະໜັບສະໜຸນດ້ານວິຊາຊີບທີ່ລະບຸໄວ້ໃນມາດຕາ 6 ຂອງກົດລະບຽບການຝຶກງານເປັນນັກຊ່ຽວຊານບັນຊີ ຊຶ່ງລວມມີ 2 ສາຍງານຫຼັກ ຄື: ສາຍງານດ້ານກວດສອບ ແລະ ວຽກງານຮັບປະກັນ ແລະ ສາຍງານການລາຍງານການເງິນ ແລະ ຄາດວ່າ ສອ-ບກລ ຈະສົ່ງບົດລາຍງານຮຽນສະເໜີມາຍັງກົມບັນຊີເພື່ອນຳສະເໜີ ທ່ານ ລັດຖະມົນຕີກະຊວງການເງິນ ພິຈາລະນາເຊັນຮັບຮອງໃບຢັ້ງຢືນນັກຊ່ຽວຊານບັນຊີລາວ ສຳລັບບັນດາບຸກຄົນທີ່ໄດ້ຜ່ານການປະເມີນທັງໝົດລວມມີ 47 ທ່ານ ດັ່ງກ່າວໃນຕົ້ນປີ 2021.



- **ຝຶກອົບຮົມຫຼັກສູດ ວິຊາຊີບຊ່ຽວຊານບັນຊີ ລຸ້ນ XIII:**
  ປັດຈຸບັນສຳເລັດຮຽນວິຊາບໍລິຫານຜົນການດຳເນີນງານແບບລົງເລິກ ແລະ ຄາດວ່າຈະມີການສອບເສັງໃນວັນທີ 10 ເດືອນມັງກອນ 2021 ແລະ ຈະສືບຕໍ່ເຂົ້າຮຽນວິຊາຜູ້ນຳທາງຍຸດທະສາດທຸລະກິດ ໃນວັນທີ 16 ມັງກອນ 2021. ສາມາດເບິ່ງຂໍ້ມູນນັກຮຽນໄດ້ໃນຕາຕະລາງ 2.



ຕາຕະລາງ 2: ຈຳນວນນັກຝຶກອົບຮົມ:

ສະຫຼຸບຈຳນວນນັກຝຶກອົບຮົມ ລຸ້ນ XIII			
-	ຈຳນວນນັກຮຽນປັດຈຸບັນ	125	ພະນັກງານລັດ 16 ທ່ານ
-	ວິຊາທີ່ກຳລັງຮຽນ		ກຳລັງກະກຽມສອບເສັງ ວິຊາບໍລິຫານຜົນການດຳເນີນງານແບບລົງເລິກ, ຍັງອີກ 1 ວິຊາຈະຈົບຫຼັກສູດທັງໝົດ

- **ຝຶກອົບຮົມຫຼັກສູດ ວິຊາຊີບຊ່ຽວຊານບັນຊີ ລຸ້ນ XIV:**

ປັດຈຸບັນແມ່ນສຳເລັດການສອບເສັງ 9 ວິຊາຂັ້ນພື້ນຖານ ແລະ ກຳລັງກະກຽມສອບເສັງຄືນ ສຳລັບຜູ້ທີ່ເສັງບໍ່ຜ່ານເຊັ່ນ: ວິຊາ F6 ຈະໄດ້ມີການສອບເສັງຄືນໃນວັນທີ 16 ມັງກອນ 2021 ແລະ ຄາດວ່າຈະສືບຕໍ່ຮຽນບັນດາວິຊາໃນລະດັບວິຊາຊີບ ຈຳນວນ 4 ວິຊາ ໃນຕົ້ນເດືອນກຸມພາ ປີ 2021, ຊຶ່ງປັດຈຸບັນຍັງມີນັກຝຶກອົບຮົມສືບຕໍ່ຮຽນ ຈຳນວນ 111 ຄົນ. ສາມາດເບິ່ງຂໍ້ມູນນັກຮຽນໄດ້ໃນຕາຕະລາງ 3.



ຕາຕະລາງ 3: ຈຳນວນນັກຝຶກອົບຮົມ

ສະຫຼຸບຈຳນວນນັກຝຶກອົບຮົມ ລຸ້ນ 14			
-	ຈຳນວນນັກຮຽນປັດຈຸບັນ	111	ພະນັກງານລັດ 2 ທ່ານ
-	ວິຊາທີ່ກຳລັງຮຽນ		ກຳລັງກະກຽມສອບເສັງຄືນ ສຳລັບຜູ້ທີ່ເສັງບໍ່ຜ່ານ 9 ວິຊາຂັ້ນພື້ນຖານ ແລະ ຄາດວ່າຈະສືບຕໍ່ຮຽນບັນດາວິຊາໃນລະດັບວິຊາຊີບ ໃນຕົ້ນເດືອນກຸມພາ

- **ຝຶກອົບຮົມຫຼັກສູດ ວິຊາຊີບຊ່ຽວຊານບັນຊີ ລຸ້ນ XV:**

ປັດຈຸບັນແມ່ນກຳລັງຮຽນວິຊາ ໃນລະດັບພື້ນຖານ ວິຊາສ່ວຍສາອາກອນລາວ ແລະ ອາກອນສາກົນ, ຊຶ່ງປັດຈຸບັນຍັງມີນັກຝຶກອົບຮົມສືບຕໍ່ຮຽນ ຈຳນວນ 114 ຄົນ. ສາມາດເບິ່ງຂໍ້ມູນນັກຮຽນໄດ້ໃນຕາຕະລາງ 4.



ຕາຕະລາງ 4: ຈຳນວນນັກຝຶກອົບຮົມ

ສະຫຼຸບຈຳນວນນັກຝຶກອົບຮົມ ລຸ້ນ 15			
-	ຈຳນວນນັກຮຽນປັດຈຸບັນ	104	ພະນັກງານລັດ 14 ທ່ານ
-	ວິຊາທີ່ກຳລັງຮຽນ		ປັດຈຸບັນກຳລັງສືບຕໍ່ຮຽນວິຊາສ່ວຍສາອາກອນ ລາວ ແລະ ອາກອນສາກົນ, ຍັງອີກ 7 ວິຊາ ຈະຈົບຫຼັກສູດທັງໝົດ

- **ຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ ລຸ້ນ XVI:**

ມີນັກຮຽນສອບເສັງຜ່ານ 243 ທ່ານ, ຊຶ່ງຈຳນວນດັ່ງກ່າວແມ່ນມາຈາກຫຼາຍພາກສ່ວນທີ່ແຕກຕ່າງກັນເຊັ່ນ: ຈາກພາກສ່ວນລັດ ໂດຍສະເພາະກະຊວງການເງິນ, ຈາກທະນາຄານແຫ່ງຊາດ ແລະ ບັນດາທະນາຄານທຸລະກິດ, ຈາກບັນດາວິສາຫະກິດທີ່ບໍລິການດ້ານບັນຊີ ແລະ ກວດສອບ, ຈາກອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນ ໆ ແລະ ຄາດວ່າຈະເປີດການຮຽນ-ການສອນ ໃນວັນທີ 09 ມັງກອນ 2021. ລາຍລະອຽດຈຳນວນຜູ້ສະໝັກລົງທະບຽນ ສາມາດເບິ່ງໄດ້ໃນຕາຕະລາງ 5.

ຕາຕະລາງ 5: ລາຍລະອຽດ ແຕ່ລະພາກສ່ວນ:

ປະເພດອົງກອນ	ຈຳນວນ (ຊາຍ)	ຈຳນວນ (ຍິງ)	ລວມທັງໝົດ
ບໍລິສັດ ໃຫ້ບໍລິການດ້ານ ບັນຊີ ແລະ ກວດສອບ	18	25	43
ນິຕິບຸກຄົນທີ່ຮັບໃຊ້ຜົນປະໂຫຍດສາທາລະນະ	8	13	21
ທະນາຄານແຫ່ງຊາດລາວ	4	9	13
ຈາກພາກສ່ວນກະຊວງການເງິນ	12	4	16
ຈາກພາກສ່ວນທຸລະກິດ	46	73	119
ສະຖາບັນການສຶກສາ (ສທຄ, ມຊ ແລະ ສະຖາບັນດົງດຳຊ້າງ)	7	13	20
ອົງການຈັດຕັ້ງສາກົນ ແລະ ພາກສ່ວນ ອື່ນໆ	3	8	11
ລວມທັງໝົດ	98	145	243

ສຳລັບແຜນການເປີດການຝຶກອົບຮົມຫຼັກສູດ ວິຊາຊີບຊ່ຽວຊານບັນຊີລຸ້ນ XVI ແມ່ນຈະໄດ້ ເປີດເປັນ 2 ຫ້ອງ , ຫ້ອງ A ແລະ B ແລະ ຈັດຕາຕະລາງການສອນແບບໃໝ່ ໂດຍການຮຽນ 2 ວິຊາໄປຄຽງຄູ່ກັນຄື: F1 ແລະ F2 ໂດຍການຊັບ 2 ວິຊາຮຽນ ຕົວຢ່າງ: ຫ້ອງ CPA XIV (A) ອັນເສົາຮຽນວິຊາ F1 ແລະ ອັນອາທິດ ຮຽນວິຊາ F2 ແລະ ຫ້ອງ CPA XIV (B) ອັນເສົາ ຮຽນວິຊາ F2 ແລະ ອັນອາທິດ ຮຽນວິຊາ F1, ແຕ່ໃນເວລາມີການສອບເສັງແມ່ນ ຄອບເສັງສອງຫ້ອງ ໃນລາຍວິຊາດຽວກັນ.

ສຳລັບສະຖານທີ່ຝຶກອົບຮົມແຕ່ລະລຸ້ນ ແມ່ນໄດ້ຍົກຍ້າຍຈາກວິທະຍາໄລບຸດວິເສດ ໄປຍັງສະຖາບັນການທະນາຄານ, ເນື່ອງຈາກວ່າວິທະຍາໄລບຸດວິເສດໄດ້ມີການປ່ຽນຊື່ ແລະ ປ່ຽນຜູ້ຈັດການໃໝ່ເລີ່ມວັນທີ 09 ມັງກອນ 2021 ເປັນຕົ້ນໄປ. ຍົກເວັ້ນລຸ້ນ 13 ເນື່ອງຈາກວ່າຍັງເຫຼືອພຽງ 1 ວິຊາກໍຈະຈົບຫຼັກສູດ.

3.2.2 ການຝຶກອົບຮົມແບບຕໍ່ເນື່ອງ (CPD) ແລະ ຫົວຂໍ້ສະເພາະ:

ເພື່ອປະຕິບັດຕາມລະບຽບການ ກ່ຽວກັບການຍົກລະດັບວິຊາຊີບແບບຕໍ່ເນື່ອງ ທີ່ກຳນົດຫຼັກການພື້ນຖານ, ເງື່ອນໄຂ ແລະ ມາດຕະການການຄຸ້ມຄອງ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສຳລັບນັກວິຊາຊີບການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບ ອິດສະຫຼະ ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາທີ່ອອກ ໂດຍ ສະພາມາດຕະຖານສາກົນດ້ານການສຶກສາ ແນໃສ່ຮັບປະກັນດ້ານການຍົກລະດັບວິຊາຊີບດັ່ງກ່າວໃຫ້ມີຄຸນນະພາບສູງ;

- ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ໄດ້ຈັດຝຶກອົບຮົມແບບຕໍ່ເນື່ອງ ວິຊາໃນລະດັບພື້ນຖານ ໂດຍ ຫຍໍ້ຂອງຫຼັກສູດນັກຊ່ຽວຊານບັນຊີ ໃຫ້ທີ່ປຶກສາບັນຊີລຸ້ນ I-XII ແລະ ນັກຝຶກອົບຮົມຫຼັກສູດວິຊາຊີບ ຊ່ຽວຊານບັນຊີ ໃນຫົວຂໍ້ ກົດໝາຍບັນຊີ ແລະ ຈັນຍາບັນ ເພື່ອກຽມພ້ອມໃນການຝຶກອົບຮົມລະດັບວິຊາຊີບ ແນໃສ່ຍົກລະດັບຕົນເອງ ໃຫ້ກາຍເປັນນັກຊ່ຽວຊານບັນຊີ ຕາມລະບຽບການ ກ່ຽວກັບ ການເປັນນັກຊ່ຽວຊານ ບັນຊີລາວ ສະບັບເລກທີ 038/ສວບກລ, ລົງວັນທີ 08 ກໍລະກົດ (07) 2016, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 100 ກວ່າຄົນ.



- ໂດຍຮ່ວມມືກັບ ມະຫະວິທະຍາໄລສີປະທຸມ, ສອ-ບກລ ໄດ້ຈັດສຳມະນາທາງອອນລາຍໃຫ້ກັບ ສະມະຊິກ ຂອງ ສອ-ບກລ ແລະ ຜູ້ສົນໃຈທົ່ວໄປ ໃນຫົວຂໍ້ ເທັກໂນໂລຊີສະໄໝໃໝ່ໃນວຽກງານການບັນຊີ ໃນວັນທີ 17 ກໍລະກົດ 2020 ເວລາ 9:00-12:00 ໂມງ.



3.2.3 ການຈັດ ແລະ ການເຂົ້າຮ່ວມປະຊຸມ:

- ຈັດກອງປະຊຸມຄະນະບໍລິຫານງານ ແລະ ຄະນະກຳມະການສຶກສາ ໃນວັນທີ 04 ກຸມພາ 2020 ເພື່ອຜ່ານຮ່າງ ລະບຽບການຝຶກງານສຳລັບຫຼັກສູດນັກຊ່ຽວຊານບັນຊີລາວ ຄັ້ງສຸດທ້າຍສຳລັບຫຼັກສູດນັກຊ່ຽວຊານບັນຊີລາວ.
- ໄດ້ຈັດກອງປະຊຸມກັບຄະນະບໍລິຫານງານ ແລະ ຄະນະກຳມະການສຶກສາເປັນປະຈຳ ເພື່ອວາງແຜນການຈັດຕັ້ງ ປະຕິບັດກິດຈະກຳ ໂດຍສະເພາະແມ່ນການຝຶກອົບຮົມ.
- ໂດຍຮ່ວມກັບ ສະຫະພັນນັກບັນຊີອາຊຽນ, ກະກຽມຈັດກອງປະຊຸມ ສະຫະພັນນັກບັນຊີອາຊຽນ ຄັ້ງທີ 130 ແລະ ກອງປະຊຸມວິຊາການ ເຊັ່ນ: ປະສານງານ ກັບຄູ່ຮ່ວມມືທາງຍຸດທະຍາດ ເປັນຕົ້ນສະພາວິຊາຊີບ ລາຊະ ອານາຈັກອັງກິດ (ACCA) ເພື່ອກະກຽມວາລະກອງປະຊຸມ ແລະ ເນື້ອໃນສຳລັບກອງປະຊຸມວິຊາການ, ສະຖານທີ່, ຜູ້ເຂົ້າຮ່ວມບັນລະຍາຍ ໃນນາມທີ່ລາວໄດ້ຮັບກຽດເປັນເຈົ້າພາບຈັດງານໃນປີນີ້. ຕາມແຜນກອງ ປະຊຸມຄາດວ່າຈະຈັດຂຶ້ນໃນວັນທີ 03-04 ເມສາ 2020, ແຕ່ອີງຕາມການແຈ້ງການຂອງກະຊວງສາທາລະນະ ສຸກກ່ຽວກັບການແຜ່ລະບາດຂອງພະຍາດ ໂຄວິດ 2019 ກອງປະຊຸມແມ່ນໄດ້ຖືກເລື່ອນໄປຢ່າງບໍ່ມີກຳນົດ.

- ວັນທີ 16 ມິຖຸນາ 2020, ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນ ການຈັດຕັ້ງປະຕິບັດມາດຕະຖານສາກົນ ດ້ານການລາຍງານການເງິນ (LFRS) ຂອງບັນດາທະນາຄານທຸລະກິດ, ຊຶ່ງຈັດໂດຍ ກົມບັນຊີ ທະນາຄານແຫ່ງ ສປປ ລາວ



- ໂດຍອີງໃສ່ບົດບັນທຶກຊ່ວຍຈຳ ລະຫວ່າງ ສວ-ບກລ ແລະ ສະຖາບັນການທະນາຄານ ໃນວັນທີ 15 ກໍລະກົດ 2020 ທີ່ຜ່ານມາໄດ້ມີການຈັດສຳມະນາ ກ່ຽວກັບ ຄວາມສຳຄັນ ແລະ ພາລະບົດບາດ ຂອງວິຊາຊີບການບັນຊີ ແລະ ກວດສອບ ທີ່ມີຕໍ່ການພັດທະນາເສດຖະກິດ. ຊຶ່ງເປັນກຽດເຂົ້າຮ່ວມໃນກອງປະຊຸມສຳມະນາຄັ້ງນີ້ມີ ຕາງໜ້າຈາກກົມບັນຊີ ກະຊວງການເງິນ, ຕາງໜ້າຈາກທະນາຄານແຫ່ງ ສ ປ ປ ລາວ, ຕາງໜ້າຈາກທະນາຄານ ການຄ້າຕ່າງປະເທດລາວ, ຕາງໜ້າຈາກບໍລິສັດກວດສອບຂະໜາດໃຫຍ່ໃນລາວ, ຫົວໜ້າສະຖາບັນການ ທະນາຄານ ພ້ອມດ້ວຍຄະນະ ແລະ ຄູອາຈານ, ປະທານ ແລະ ຮອງປະທານ ພ້ອມດ້ວຍຄະນະບໍລິຫານຂອງ ສວ-ບກລ. ນອກຈາກນັ້ນຍັງມີນັກສຶກສາປີສຸດທ້າຍຂອງສະຖາບັນການທະນາຄານເຂົ້າຮ່ວມສຳມະນາ ຊຶ່ງມີ ຜູ້ເຂົ້າຮ່ວມທັງໝົດ 200 ກວ່າຄົນ.



- ວັນທີ 29 ກໍລະກົດ 2020 ທີ່ຜ່ານມາ, ເພື່ອເປັນການ ກະກຽມຄວາມພ້ອມ ໃນການຈັດຕັ້ງປະຕິບັດກົດ ລະບຽບການຝຶກງານ, ສອ-ບກລ ໄດ້ມີການຈັດການສໍາມະນາເຜີຍແຜ່ ກ່ຽວກັບ ໜ້າທີ່ ແລະ ພາລະບົດບາດ ຂອງ ຄະນະຜູ້ຊີ້ນໍາທີ່ຕິດພັນກັບວຽກງານ ການຝຶກງານໃຫ້ກັບນັກຝຶກອົບຮົມໃນຫຼັກສູດ ນັກວິຊາຊີບ ຊ່ຽວຊານບັນຊີ ຊຸດທີ 12 ທີ່ຫ້ອງການ ສອ-ບກລ.

- ໄດ້ເຂົ້າຮ່ວມ ປະຊຸມ ແລະ ຮ່ວມເຮັດວຽກກັບ ສໍານັກງານຄຸ້ມຄອງຕະຫຼາດຫຼັກຊັບ, ທະນາຄານແຫ່ງ ສປປ ລາວ (ສຄຄຊ) ໃນໂຄງການ ການຂ້າມຜ່ານ ເຂົ້າສູ່ ການຈັດຕັ້ງປະຕິບັດ ມາດຕະຖານ ການລາຍງານການເງິນ ສາກົນ.

- ໃນວັນທີ 3 ເມສາ 2020, ສອ-ບກລ ໄດ້ມີປະຊຸມ ທາງອອນລາຍ (skype) ກັບຕົວແທນຈາກ ສະຫະພັນນັກ ບັນຊີສາກົນ ເພື່ອ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ພັນທະການເປັນສະມະຊິກຂອງ ຕົນເອງ ແລະ ລາຍງານສະພາບ ແລະ ແຜນການ ເພື່ອຈະຮັບມືກັບພະຍາດ Covid-19.
- ໃນວັນທີ 9 ເມສາ 2020, ສອ-ບກລ ໄດ້ ມີປະຊຸມທາງອອນລາຍກັບ ສະພາວິຊາຊີບ ອິດສະຕາລີ ເພື່ອຖອດ ຖອນບົດຮຽນ ແລະ ການຮັບມືຕ່າງໆ ຕໍ່ກັບພະຍາດ Covid-19.

- ວັນທີ 8 ທັນວາ 2020, AFA – ACCA ASEAN IFRS Webinar - The Bridge to International Trade



IV. ດ້ານການເງິນ:

4.1 ລາຍຮັບ:

ແຫຼ່ງລາຍຮັບຕົ້ນຕໍແມ່ນໄດ້ມາຈາກການຝຶກອົບຮົມນັກຊ່ຽວຊານບັນຊີລາວ ລຸ້ນ 12, ລຸ້ນ 13, ລຸ້ນ 14 ລຸ້ນ 15 ແລະ ລຸ້ນ 16, ຮັບຈາກຄ່າບຳລຸງສະມາຊິກບຸກຄົນ ແລະ ສະມາຊິກນິຕິບຸກຄົນ, ຮັບຈາກການຝຶກອົບຮົມຍົກລະດັບ ໃຫ້ນັກຊ່ຽວຊານບັນຊີລຸ້ນ 1-12, ຮັບຈາກການສະໜັບສະໜຸນກອງປະຊຸມ ເຊັ່ນຈາກສະມາຊິກ ສວ-ບກລ ແລະ ພາກສ່ວນອື່ນ ໆ.

4.2 ຂົງເຂດລາຍຈ່າຍ:

ແຫຼ່ງລາຍຈ່າຍຕົ້ນຕໍສຳລັບປີ 2020 ແມ່ນຈ່າຍສຳລັບການຝຶກອົບຮົມນັກຊ່ຽວຊານບັນຊີລາວ ລຸ້ນ 12, ລຸ້ນ 13, ລຸ້ນ 14 ແລະ ລຸ້ນ 15, ຈ່າຍຄ່າບໍລິຫານຫ້ອງການເປັນຕົ້ນຄ່າເຊົ່າຫ້ອງການ, ຄ່າເຊົ່າສະຖານທີ່ຝຶກອົບຮົມ, ຈ່າຍຄ່າຕອບແທນພະນັກງານ (ເງິນເດືອນ), ອາກອນເງິນເດືອນ, ປະກັນສັງຄົມ, ຈ່າຍຊື້ພາຫະນະຮັບໃຊ້ ໃນການເຄື່ອນໄຫວວຽກງານຕ່າງໆ, ຈ່າຍຄ່າບຳລຸງສະມາຊິກສະຫະພັນນັກບັນຊີອາຊຽນ ແລະ ຈ່າຍຄ່າບຳລຸງສະມາຊິກສະຫະພັນນັກບັນຊີສາກົນ, ຈ່າຍຄ່າບໍລິການກວດສອບບັນຊີ ແລະ ຈ່າຍສຳລັບກອງປະຊຸມປະຈຳປີ 2019 ຂອງ ສວ-ບກລ. ຈ່າຍສຳລັບທີ່ປຶກສາທາງດ້ານວິຊາການເຊັ່ນ: ຄ່າເບ້ຍລ້ຽງ, ການເດີນທາງ ແລະ ທີ່ພັກອາໄສ. ນອກຈາກນີ້ ຍັງມີຄ່າໃຊ້ຈ່າຍສະໜັບສະໜຸນກິນບັນຊີ-ກະຊວງການເງິນເຊັ່ນ: ສະໜັບສະໜຸນໃນການເຂົ້າຮ່ວມກອງປະຊຸມສຳມະນາທັງພາຍໃນ-ຕ່າງປະເທດ ແລະ ງານລ້ຽງຕ່າງ ໆ ທີ່ຈຳເປັນ. (ມີເອກະສານລາຍງານການເງິນປະຈຳປີ 2020 ຄັດຕິດຢູ່ດ້ານຫຼັງ)

V. ແຜນການເຄື່ອນໄຫວປະຈຳປີ 2021

- ກະກຽມປິດລາຍງານການເຄື່ອນໄຫວວຽກງານ ພ້ອມທັງສະຫຼຸບງົບປະມານ ປະຈຳປີ 2020 ຂອງ ສວ-ບກລ;
- ສືບຕໍ່ກະກຽມ ພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສວ-ບກລ ແລະ ໃຫ້ສອດຄ່ອງກັບສະພາບເສດຖະກິດ - ສັງຄົມຂອງລາວໃນປັດຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາສຳລັບວິຊາຊີບການບັນຊີ;
- ປະສານຮ່ວມມືກັບສະຖາບັນການທະນາຄານເພື່ອປຶກສາຫາລື ຄວາມເປັນໄປໄດ້ສຳລັບໂຄງການຮ່ວມຈັດຕັ້ງປະຕິບັດການຝຶກອົບຮົມທາງດ້ານວິຊາການ ແລະ ວາງແຜນເປີດການຝຶກອົບຮົມຫຼັກສູດສາກົນ;
- ວາງແຜນຈັດຝຶກອົບຮົມ ກ່ຽວກັບ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ທີ່ກຳນົດຫຼັກການພື້ນຖານ, ເງື່ອນໄຂ ແລະ ມາດຕະການຄຸ້ມຄອງການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສຳລັບນັກວິຊາຊີບການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບອິດສະຫຼະ ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາທີ່ອອກໂດຍສະພາ ມາດຕະຖານສາກົນດ້ານການສຶກສາແມ່ນແນໃສ່ຮັບປະກັນດ້ານການຍົກລະດັບວິຊາຊີບດັ່ງກ່າວໃຫ້ມີຄຸນນະພາບສູງ;
- ເປີດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ລຸ້ນ 16, ຄາດວ່າຈະເປີດຮຽນ-ການສອນໃນຕົ້ນປີ 2021;
- ສຶກສາຄວາມເປັນໄປໄດ້ໃນການເປີດການຮຽນ-ການສອນ ໃນລະບົບອອນລາຍ;
- ປັບປຸງໂຄງຮ່າງການຈັດຕັ້ງຂອງ ສວ-ບກລ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານແຕ່ລະຄົນຄືນໃໝ່;

- ສືບຕໍ່ຮ່ວມມືກັບພະແນກກວດສອບ ກົມບັນຊີ ເພື່ອຕິດຕາມສະມາຊິກ ຜູ້ທີ່ບໍ່ປະຕິບັດລະບຽບ ແລະ ບໍ່ປະຕິບັດພັນທະ, ຜູ້ທີ່ຍັງບໍ່ທັນເຂົ້າເປັນສະມາຊິກຂອງ ສວ-ບກລ;
- ສືບຕໍ່ ຈັດຕັ້ງປະຕິບັດ ລະບຽບການຝຶກອົບຮົມ ເປັນນັກຊ່ຽວຊານບັນຊີລາວ ສຳລັບນັກຝຶກອົບຮົມລຸ້ນ XII ແລະ ລຸ້ນ XIII ທີ່ກຳລັງຈະຈົບ ຫຼັກສູດວິຊາຊີບ ຊ່ຽວຊານບັນຊີລາວ;
- ສືບຕໍ່ ຈັດການຮຽນການສອນ ຫຼັກສູດວິຊາຊີບ ຊ່ຽວຊານບັນຊີ ລຸ້ນ XIII, XIV ແລະ XV;
- ສືບຕໍ່ປະສານງານ ແລະ ຮ່ວມເຮັດວຽກກັບ ສະຫະພັນນັກບັນຊີ ອາຊຽນ ແລະ ສະຫະພັນນັກບັນຊີສາກົນ ຕາມພັນທະການເປັນສະມະຊິກຂອງສະຫະພັນດັ່ງກ່າວ.

ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ(03) 2021

ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

ປະທານ

ດຣ.ນ.ພິລານີ ພິດສະໄໝ

ເອກະສານຊ້ອນທ້າຍ

- ☑ ລາຍຊື່ສະມາຊິກນິຕິບຸຄົນ ຂອງ ສວ-ບກລ
- ☑ ເອກະສານລາຍງານການເງິນສຳລັບປີການບັນຊີທີ່ສິ້ນສຸດ ໃນວັນທີ 31 ທັນວາ 2020

ເອກະສານຊ້ອນທ້າຍ 1: ລາຍຊື່ສະມາຊິກນິຕິບຸກຄົນ ຂອງ ສວ-ບກລ

No.	Membership ID.	ຊື່ບໍລິສັດ	Company's Name	Business Type	Phone	Email
1	lcpaa/1-2-00001	ບໍລິສັດ ທີຊີ ບໍລິການບັນຊີ ຈຳກັດຜູ້ດຽວ	TC Accounting Service Co.,LTD	Accounting & Auditing	020 56319965; 020 56319965	poupee1990@hotmail.com
2	lcpaa/1-2-00003	ບໍລິສັດ ເອແອນດີ ທີ່ປຶກສາບັນຊີ ແລະ ບໍລິການ ຈຳກັດ	A&D Accounting and Consultant Co.,LTD	Accounting	021 453224; 020 55502119	aadservice@yahoo.com
3	lcpaa/1-2-00005	ບໍລິສັດ ເອໄອເອັສ ບໍລິການບັນຊີ ແລະ ກວດສອບ ຈຳກັດ	AIS Accounting and Auditing Service Co.,LTD	Accounting & Auditing	021 620582; 020 55733559	ais_2005@yahoo.com
4	lcpaa/1-2-00006	ວິສາຫະກິດ ສ່ວນບຸກຄົນ ແສງສະເດັດ ທີ່ ປຶກສາບັນຊີ	Account Commercial Finance Individual Enterprise	Accounting & Auditing	020 56118170; 020 55994488	lookmeewhite@hotmail.com
5	lcpaa/1-2-00007	ບໍລິສັດ ເອກປັນຍາ ທີ່ປຶກສາ ຈຳກັດຜູ້ດຽວ	Ekpanya Consulting Co., LTD	Accounting	020 56542324; 020 28888248	akaekpanya@yahoo.com
6	lcpaa/1-2-00008	ບໍລິສັດ ເອເຄຊີ ທີ່ປຶກສາບັນຊີ ແລະ ກວດ ສອບ ຈຳກັດຜູ້ດຽວ	AKC Accounting Consultant & Audit Sole Co.,LTD	Accounting	021 453553; 020 55514827	akcconsultan@yahoo.com
7	lcpaa/1-2-00009	ບໍລິສັດ ແກຣນ ບໍລິການທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ	Grand Accounting Consultant & Auditng Service Sole Co.,LTD	Accounting & Auditing	021 265758; 020 22221740	info@grandaccountinglaos.com
8	lcpaa/1-2-00010	ບໍລິສັດ ເອຊີເອ ຈຳກັດ	ACA Co.,LTD	Accounting & Auditing	020 22403446; 020 55685819	phonemy_sp@yahoo.com
9	lcpaa/1-2-00012	ບໍລິສັດ ເອຊີ ບໍລິການ ແລະ ທີ່ປຶກສາບັນຊີ ຈຳກັດ	Accounting & Consultancy Service Co.,LTD	Accounting	021 314889; 020 55520979	vanhdaraktr@yahoo.com
10	lcpaa/1-2-00013	ບໍລິສັດ ເອເອເອັສ ຈຳກັດຜູ້ດຽວ	AAS Co.,LTD	Accounting	020 22210550; 020 55503009	aas.vongsouvanh@gmail.com
11	lcpaa/1-2-00014	ບໍລິສັດ ມານະຈິດ ບໍລິການທີ່ປຶກສາ ແລະ ກວດສອບບັນຊີ ຈຳກັດ	Manachit Accounting Service, Consultancy and Auditing Co.,LTD	Accounting	021 460542; 020 22255509	suliyeth@hotmail.com
12	lcpaa/1-2-00015	ບໍລິສັດ ເອັສ-ທຸລະກິດການບັນຊີ ຈຳກັດ	S-Business Accounting Co.,LTD	Accounting	021 453892; 020 56007007	sbasoft@hotmail.com
13	lcpaa/1-2-00017	ບໍລິສັດ ສົມພົງ ບໍລິການບັນຊີ ຈຳກັດຜູ້ ດຽວ	Somphong Accouting Service Sole Co.,LTD	Accounting & Auditing	030 5713769; 021 352218	phongss4@gmail.com
14	lcpaa/1-2-00018	ບໍລິສັດ ທີ່ປຶກສາ ແລະ ບໍລິການ ແອ໋ກມິນ ຈຳກັດຜູ້ດຽວ	ACCMIN Consulting and Services Co.,Ltd	Accounting & Auditing	021 264197; 020 55620905	khampiew@accminlao.com

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

No.	Membership ID.	ຊື່ບໍລິສັດ	Company's Name	Business Type	Phone	Email
15	lcpaa/1-2-00020	ບໍລິສັດ ເຄເຄພີ ທີ່ປຶກສາບັນຊີ ຈຳກັດຜູ້ດຽວ	KKP Accounting Consultancy Sole Co.,LTD	Accounting	020 55707285;	kkpaccounting@hotmail.com
16	lcpaa/1-2-00022	ວິສາຫະກິດ ສ່ວນບຸກຄົນ ເອັສ ບີ ເອັນ ບໍລິການບັນຊີ ແລະ ກວດສອບບັນຊີ	SBN Accounting Consultant Enterprise	Accounting & Auditing	020 55629051;	bounnacpa@yahoo.com
17	lcpaa/1-2-00023	ບໍລິສັດ ຈັນທະວົງ ແອນ ອາໂຊຊິເອັສ ຈຳກັດ	Chanthavong and Associates Co.,LTD	Accounting & Auditing	020 55584675; 021 262613	souksavanhc@yahoo.com
18	lcpaa/1-2-00024	ບໍລິສັດ ບໍລິການບັນຊີ ແລະ ທີ່ປຶກສາກ່ຽວກັບທຸລະກິດ ຈຳກັດຜູ້ດຽວ	Accounting Service and Business Consultancy Sole Co.LTD	Accounting & Auditing	021 480578; 020 59226399	asbcthanh7@gmail.com
19	lcpaa/1-2-00026	ບໍລິສັດ ລາວບໍລິການບັນຊີ ແລະ ກວດສອບບັນຊີ ຈຳກັດຜູ້ດຽວ	Lao Accounting Service and Auditing Sole Co.,LTD	Accounting & Auditing	021 480226; 020 55513247	laoaudit@hotmail.com
20	lcpaa/1-2-00027	ບໍລິສັດ ວຽງຈັນອິນເຕີເນເຊີນແນວ ຈຳກັດ	Vientiane International Co.,LTD	Accounting & Auditing	021 455065; 020 5579 2275	phouvanhkolao@hotmail.com
21	lcpaa/1-2-00028	ບໍລິສັດ ແອກສ໌ຄິວຣະຊີ ທີ່ປຶກສາ, ບໍລິການ ບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ	Accuracy Accounting Consultancy & Auditing Services Co., LTD	Accounting & Auditing	021 621126; 020 22231456	aaca.sisoulath@yahoo.com
22	lcpaa/1-2-00029	ບໍລິສັດ ເຄພີເອັມ ທີ່ປຶກສາ ແລະ ກວດ ສອບ ຈຳກັດຜູ້ດຽວ	KPM Accounting Consultancy and Auditing Sole Co.,LTD	Accounting	021 215596; 020 22412937	viphaphone_manivong@yahoo.com
23	lcpaa/1-2-00030	ບໍລິສັດ ເອເຊຍ ປາຊີຟິກ ບໍລິການບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ	Asia Pacific Accounting and Audit Services Sole Co.,LTD	Accounting & Auditing	020 22239550;	oun_one@yahoo.com
24	lcpaa/1-2-00033	ບໍລິສັດ ພັນຍູລາດ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ	Phanyoulath Consulting Accounting and Auditing Co., LTD	Accounting & Auditing	030 9883911; 021 216176	soubanh245@yahoo.com
25	lcpaa/1-2-00034	ບໍລິສັດ ທີ່ປຶກສາອີບິດ ຈຳກັດ	EBIT Consultancy Co.,LTD	Accounting & Auditing	021 740486; 020 55245588	skongpasa@ebitconsultancy.com
26	lcpaa/1-2-00035	ບໍລິສັດ ພີເອ ບໍລິການ ຈຳກັດ	PA Service Co.,LTD	Accounting	021 254056; 020 55717349	ploy@laotel.com
27	lcpaa/1-2-00036	ບໍລິສັດ ເອັສພີ ທີ່ປຶກສາບັນຊີ - ກວດສອບ ບັນຊີ ແລະ ທີ່ປຶກສາການລົງທຶນ ຈຳກັດ	SP Accounting Consultancy - Auditing and Investment Consultancy Co.,LTD	Accounting & Auditing	020 55662915; 020 22822895	spaca_l@yahoo.com
28	lcpaa/1-2-00038	ບໍລິສັດ ເອັສເອັນພີ ບໍລິການບັນຊີ ຈຳກັດຜູ້ດຽວ	SNP Accounting Service Co.,LTD	Accounting & Auditing	021 213063; 020 55514551	snpaccounting@yahoo.com
29	lcpaa/1-2-00039	ບໍລິສັດ ເຄເອັສບີ ບໍລິການບັນຊີ ຈຳກັດ	KSB Accounting Services Limited	Accounting & Auditing	021 250700; 020 22235111	ksblao7@ymail.com

No.	Membership ID.	ຊື່ບໍລິສັດ	Company's Name	Business Type	Phone	Email
30	lcpaa/1-2-00040	ບໍລິສັດ ເອັສພີເຄ ຈຳກັດ	SPK Co.,Ltd	Accounting	020 22444458; 030 5222117	Khamwaen@hotmail.com
31	lcpaa/1-2-00042	ບໍລິສັດ ທຣີບເປັນເອ ທີ່ປຶກສາ ບໍລິການ ບັນຊີ ແລະ ກວດສອບບັນຊີ ຈຳກັດຜູ້ດຽວ	Advance Accounting and Auditing Service Co.,LTD	Accounting	021 240009; 020 55502414	vieng502@yahoo.com
32	lcpaa/1-2-00043	ບໍລິສັດ ອາເກຣນ ທີ່ປຶກສາບັນຊີ ຈຳກັດຜູ້ດຽວ	AR KRYN Consulting Service Sole Co.,LTD	Accounting	020 20666670;	rkrynservice@hotmail.com
33	lcpaa/1-2-00044	ບໍລິສັດ ສະຫວັນ ທີ່ປຶກສາ - ກວດສອບ - ຝຶກດ້ານການບັນຊີ ຈຳກັດຜູ້ດຽວ	SAVAN Consultant - Audits - Training Accounting Co., Ltd	Accounting	041 212799; 020 99728888	scatavanh@hotmail.com
34	lcpaa/1-2-00046	ບໍລິສັດ ຊີເອແອວ ທີ່ປຶກສາ ແລະ ກວດ ສອບບັນຊີ (ລາວ) ຈຳກັດ	CAL Consultancy and Auditing (Lao) Co.,LTD	Accounting & Auditing	020 55606877;	cal.vanxay@yahoo.com
35	lcpaa/1-2-00047	ບໍລິສັດ ລາວ - ພີພີເອ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດ	Lao - PPA Accounting Consultancy and Auditing Co., LTD	Accounting & Auditing	020 22422842;	sengthong.acc@gmail.com
36	lcpaa/1-2-00048	ບໍລິສັດ ເອັສທີດີ ບໍລິການບັນຊີ ຈຳກັດຜູ້ດຽວ	STD Accounting Service Sole Co.,LTD	Accounting	030 5747709; 020 99545269	std-sole@hotmail.com
37	lcpaa/1-2-00049	ບໍລິສັດ ທີເອັດສ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດ	TS Accounting and Auditing Co.,LTD	Accounting & Auditing	020 56366264; 020 55605233	Tsaa.company@yahoo.com
38	lcpaa/1-2-00050	ບໍລິສັດ ເອແອນເອ ບໍລິການ ແລະ ທີ່ປຶກສາ ບັນຊີ ຈຳກັດຜູ້ດຽວ	A and A Accounting and Consultancy Service Sole Co.,LTD	Accounting	020 22225117;	aloun.aac@gmail.com
39	lcpaa/1-2-00051	ບໍລິສັດ ເອພີ ທີ່ປຶກສາ ແລະ ກວດສອບ ຈຳກັດຜູ້ດຽວ	AP Accounting Consultancy and Auditing Sole Co.,LTD	Accounting	021 711249; 020 99999500	ap_cas@yahoo.com
40	lcpaa/1-2-00052	ບໍລິສັດ ທີ່ປຶກສາບັນຊີ ລາວເອເຊຍ ຈຳກັດ ຜູ້ດຽວ	Accountant Lao - Asia Sole Co.,LTD	Accounting	020 56701448;	accountkhamphou@hotmail.com
41	lcpaa/1-2-00054	ບໍລິສັດ ເຮັດທີ ທີ່ປຶກສາ ຈຳກັດຜູ້ດຽວ	HT Accountant Sole Co.,LTD	Accounting	020 22219390; 020 55627265	phaipanya@yahoo.com
42	lcpaa/1-2-00056	ບໍລິສັດ ເອັສເຄເອັນພີ ຈຳກັດ	SKNP Co.,LTD	Accounting & Auditing	020 55449559;	sonexay.silaphet@gmail.com
43	lcpaa/1-2-00057	ບໍລິສັດ ເອັນທີເອ ຈຳກັດ	NTA Co .,LTD	Accounting & Auditing	020 91179896; 020 22212023	anolay@phosy.com
44	lcpaa/1-2-00058	ບໍລິສັດ ເອ 2 ແຊັດ ຈຳກັດຜູ້ດຽວ	A2Z Sole Co.,LTD	Accounting & Auditing	020 23175999;	Thephathay.a2z@gmail.com
45	lcpaa/1-2-00059	ບໍລິສັດ ເອເອເອັສ ລາວ ຈຳກັດ	AAS Lao Co.,LTD	Accounting & Auditing	020 55612518;	manisouks@yahoo.com

No.	Membership ID.	ຊື່ບໍລິສັດ	Company's Name	Business Type	Phone	Email
46	lcpaa/1-2-00060	ບໍລິສັດ ທີ່ປຶກສາບັນຊີລາວ-ສາກົນ ຈຳກັດຜູ້ດຽວ	Lao-International Accounting Consultancy Sole Co.,LTD	Accounting	020 22402366;	gnasonthi@yahoo.com
47	lcpaa/1-2-00061	ບໍລິສັດ ວີເອັສພີ ບໍລິການບັນຊີ ຈຳກັດ	VSP Accounting Service Co.,LTD	Accounting & Auditing	021 710667; 020 22229793	padith@yahoo.com
48	lcpaa/1-2-00062	ບໍລິສັດ ເຄພີພີ ຈຳກັດ	KPP Co.,LTD	Accounting & Auditing	030 5713793; 020 22225297	kk.phearkeo@gmail.com
49	lcpaa/1-2-00063	ບໍລິສັດ ບີດີໂອ ລາວ ຈຳກັດ	BDO (Laos) Co.,LTD	Accounting & Auditing	021 265608; 020 99999566	sslim@bdo.my
50	lcpaa/1-2-00064	ບໍລິສັດ ວຽງຈັນການບັນຊີ ຈຳກັດຜູ້ດຽວ	Vientiane Accounting Sole Co.,LTD	Accounting	021 561058; 020 22219997	viengkeo.acc@gmail.com
51	lcpaa/1-2-00065	ບໍລິສັດ ວີວີ ບໍລິການບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ	VIVI Accounting and Audit Service Sole Co.,LTD	Accounting & Auditing	020 22226488;	feuang88@hotmail.com
52	lcpaa/1-2-00067	ບໍລິສັດ ເຄພີວີ ທີ່ປຶກສາ ແລະ ກວດສອບ ບັນຊີ ຈຳກັດ	KPV Account Consulting and Auditng Co.,LTD	Accounting & Auditing	020 55611323; 020 29800035	pvsco.lao@gmail.com
53	lcpaa/1-2-00068	ບໍລິສັດ ຫ້ອງການທີ່ປຶກສາບັນຊີ ແອວເອເຄ ຈຳກັດຜູ້ດຽວ	LAK Sole Co.,LTD	Accounting	020 77751345;	litthadet@gmail.com
54	lcpaa/1-2-00069	ບໍລິສັດ ທິບປັນຍາ ຈຳກັດ	Thippanya Co.,LTD	Accounting & Auditing	020 28202123; 020 23008484	lattanavanh79@gmail.com
55	lcpaa/1-2-00071	ບໍລິສັດ ພີເອັສແອວ ບໍລິການບັນຊີ ແລະ ກວດສອບ ຈຳກັດ	PSL Accounting and Auditing Service Co.,LTd	Accounting & Auditing	021 264210; 020 55279879	phoutpaserth.pslaa@gmail.com
56	lcpaa/1-2-00073	ບໍລິສັດ ພີເອັດສພີ ຈຳກັດ	PSP Co.,LTD	Accounting & Auditing	020 55630885; 020 77925445	deth.sld@gmail.com
57	lcpaa/1-2-00075	ບໍລິສັດ ທີບີເອັສ ບໍລິການທີ່ປຶກສາດ້ານການບັນຊີ ຈຳກັດ	TBS Accounting Consultancy Service Co.,LTD	Accounting	020 52864489;	
